

ຈົ່ງຟັງຂໍ້ຄວາມນີ້





Lesson 7 for November 14, 2026















“ເຫດການທັງໝົດເຫຼົ່ານີ້ ໄດ້ເກີດຂຶ້ນແກ່ບັນພະບຸລຸດ
ຂອງພວກເຮົາ ກໍເພື່ອເປັນຕົວຢ່າງໃຫ້ແກ່ຜູ້ອື່ນ ແລະ
ໄດ້ບັນທຶກເຫດການທັງໝົດນີ້ໄວ້ ເພື່ອເຕືອນສະຕິ
ພວກເຮົາ ຊຶ່ງຢູ່ໃນຍຸກສຸດທ້າຍທີ່ກຳລັງຈະມາເຖິງ.”
1 ໂກຣິນໂທ 10:11





ບັນດາຜູ້ທຳນວາຍໃນພຣະຄຳພີຍັງຍຶດໝັ້ນໃນມາດຕະຖານທາງສິນລະທຳຂັ້ນສູງສຸດ, ພວກເພິ່ນຊີ້ນຳຜູ້ຄົນໃຫ້ມີຄວາມສັດທາໃນອົງພຣະຜູ້ເປັນເຈົ້າຫລາຍຂຶ້ນ, ຕັກເຕືອນໃຫ້ຫລີກລ່ຽງຈາກການເຮັດບາບ, ອີກທັ້ງຍັງຍອມມອບການປອບໂຍນ ແລະ ເສີມສ້າງໃຫ້ແກ່ຜູ້ຄົນ.

ຜູ້ທີ່ຮັບຟັງແລະຍອມຮັບຖ້ອຍຄຳຂອງພວກເພິ່ນຕ່າງກໍໄດ້ຮັບພອນປະໂຫຍດມະຫາສານ

ຕົວຢ່າງກໍລະນີຂອງກະສັດອາສາ Asa (2ຂ່າວຄາວ 15:1-8); ເຢໂຮຊາຟັດ (2ຂ່າວຄາວ. 20:14-23); ອາມາຊີຢາ (2ຂ່າວຄາວ 25:7-10).

ແຕ່ໜ້າເສຍດາຍ, ສິ່ງນັ້ນບໍ່ແມ່ນແນວໂນ້ມແບບທົ່ວໄປຂອງຊາວອິດສະລາເອນ. ເພາະຫລາຍຕໍ່ຫລາຍຄັ້ງຖ້ອຍຄຳຂອງຜູ້ທຳນວາຍໄດ້ຖືກປະຕິເສດເລື້ອຍໆ. ແຕ່ໃນປະຈຸບັນນີ້ ພຣະເຈົ້າຍັງຄົງກ່າວຜ່ານຜູ້ທຳນວາຍຂອງພຣະອົງຢູ່

ແລ້ວພວກເຮົາເດ ຈະຕອບສະໜອງຕໍ່ຂ່າວປະເສີດແບບໃດ?



- ການປະຕິເສດຜູ້ສົ່ງຂ່າວສານ
- ການປະຕິເສດຂ່າວສານ
  - ການດູໝິ່ນ
  - ຄວາມດື້ດ້ານ
  - ຄວາມໜ້າຊື່ໃຈຄົດ
- ການນຳໄປປະຍຸກໃຊ້

ການປະຕິເສດຂ່າວປະເສີດ



“ພວກເຂົາຈົ່ມຮ້າຍໃສ່ໂມເຊ ແລະ ອາໂຣນວ່າ ຕາຍຢູ່ທີ່ປະເທດເອຢິບ...ກໍຍັງດີກວ່າ, ແຕ່ໂຢຊວຍລູກຊາຍຂອງນູນ ແລະ ກາເລັບລູກຊາຍຂອງເຢຟຸເນ ສອງຄົນໃນຈຳພວກນັກສືບສອດແນມໄດ້ຈີກເສື້ອຂອງຕົນດ້ວຍຄວາມເສຍໃຈ, : ແລະເວົ້າຕໍ່ປະຊາຊົນວ່າ... ແຕ່ຊຸມຊົນທັງໝົດກຳລັງຈະໃຊ້ຫີນແກວ່ງໃສ່ໂມເຊແລະອາໂຣນໃຫ້ຕາຍ” (ຈຊບຊ 14:2-10)



ທີ່ປະຕູທາງເຂົ້າຂອງດິນແດນພັນທະແຫ່ງສັນຍາ, ນັກສືບສອດແນມໄດ້ຖືກສົ່ງອອກໄປ. ແລະ ພວກເຂົາລາຍງານວ່າ ດິນແດນນັ້ນເປັນດິນແດນທີ່ດີເລີດ (ຈຊບຊ 13:27). ແຕ່ຖ້ອຍຄຳທີ່ເຮັດໃຫ້ຫໍ່ແທ້ໄດ້ຖືກເອີ່ຍຂຶ້ນມາ (ຈຊບຊ 13:28, 31). ແລະພຣະເຈົ້າໄດ້ກ່າວກັບກາເລັບເພື່ອໜູນໃຈພວກເຂົາ (ຈຊບຊ 13:30).



ຫລັງຈາກໃຊ້ເວລາໄຕ່ຕອງໝົດມື້ແລ້ວ ຜູ້ຄົນເຫລົ່ານັ້ນກໍ່ຕັດສິນໃຈປະຕິເສດຜູ້ຮັບໃຊ້ຂອງພຣະເຈົ້າ ທີ່ຄອຍນຳທາງພວກເຂົາມາໂດຍຕະຫລອດ (ຈຊບຊ 14:1-4). ເມື່ອໂຢຊວຍ ແລະ ກາເລັບກ່າວຄຳໜູນໃຈພວກເຂົາອີກຄັ້ງ, ພວກເຂົາຕັດສິນໃຈທີ່ຈະແກວ່ງກ້ອນຫີນໃສ່ພວກເພິ່ນ (ຈຊບຊ 14:6-10).



ຕໍ່ມາຜູ້ນຳຄົນອື່ນໆກໍ່ຖືກປະຊາຊົນປະຕິເສດເຊັ່ນດຽວກັນ (2ຂ່າວຄາວ 25:15-16; ອາໂມດ 7:10-13).

ເປັນຫຍັງພວກເຂົາຈຶ່ງປະຕິເສດຜູ້ຮັບໃຊ້ເຫລົ່ານັ້ນ? ເພາະວ່າຂ່າວສານທີ່ພຣະເຈົ້າມອບໃຫ້ພວກເຂົາໄປແຈ້ງຕໍ່ປະຊາຊົນນັ້ນ ບໍ່ຕົງກັບຄວາມຕ້ອງການຂອງພວກເຂົາ, ແລະພວກເຂົາກໍ່ບໍ່ຢາກທີ່ຈະປະຖິ້ມຄວາມບາບຂອງພວກເຂົາອີກເຊັ່ນກັນ.



ການປະຕິເສດຂ່າວປະເສີດ



ການດູໝິ່ນ

"ພໍເຢຮູດີອ່ານສຸດສາມສີ່ຕອນເທົ່ານັ້ນ ກະສັດກໍໃຊ້ມີດນ້ອຍຕັດຕອນນັ້ນຖິ້ມໃສ່ໄຟ. ເພິ່ນສືບຕໍ່ເຮັດເຊັ່ນນີ້ຈົນໜັງສືມ້ວນນັ້ນຖືກຈູດທັງໝົດ." ເຢເຣມີຢາ 36:23

ໃນສະໄໝຂອງກະສັດເຢໂຮອາຄິມ ປະຊາຊົນໄດ້ເຮັດບາບຄັ້ງໃຫຍ່, ພຣະເຈົ້າຈຶ່ງຊົງບັນຊາໃຫ້ເຢເຣມີຢາຂຽນຖ້ອຍຄຳ ຄຳທຳນວາຍລົງໃນມ້ວນໜັງສື ເພື່ອເຕືອນກະສັດ ແລະ ຜູ້ທີ່ປຶກສາຂ້າຣາຊການ ຕ່າງໆຂອງກະສັດນັ້ນ ໃຫ້ກັບໃຈຈາກການກະທຳອັນຊົ່ວຮ້າຍ (ຢຣມຢ 36:1-3).


ແຕ່ກະສັດເຢໂຮອາຄິມກັບດູໝິ່ນຖ້ອຍຄຳເຫລົ່ານັ້ນ ແລະ ທຳລາຍຖິ້ມໂດຍການເອົາໜັງສືມ້ວນນັ້ນໄປຈູດຖິ້ມ (ຢຣມຢ 36:21-25).

ດ້ວຍເຫດນີ້ຈຶ່ງມີຄຳທຳນວາຍທີ່ຮຸນແຮງປະກາດອອກມາໃຫ້ກັບກະສັດເຢໂຮອາຄິມ (ຢຣມຢ 36:27-31).



ພວກເຮົາອາດຈະຄິດວ່າ ຖ້າພວກເຮົາບໍ່ອ່ານພຣະຄຳພີ, ພວກເຮົາກໍສາມາດເຮັດສິ່ງໃດກໍໄດ້ຕາມທີ່ພວກເຮົາຕ້ອງການ ແລະ ດຳລົງຊີວິດຢ່າງສະງົບສຸກ. ແຕ່ຖ້າພວກເຮົາລະເລີຍຄຳເຕືອນຂອງພຣະເຈົ້າ, ພວກເຮົາກໍຈະໄດ້ຮັບຜົນຈາກບາບ ແລະ ຄວາມຊົ່ວຮ້າຍຂອງພວກເຮົາເອງ.





ການດື້ດ້ານ

“ເຊເດກີຢາໄດ້ກະບົດຕໍ່ກະສັດເນບູກາເນັດຊາ ຜູ້ທີ່ໄດ້ບັງຄັບເພິ່ນໃຫ້ສາບານໂດຍພຣະເຈົ້າວ່າຈະຍອມສັດຊື່. ເພິ່ນດື້ດຶງບໍ່ຍອມກັບໃຈໃໝ່ ແລະ ຄືນມາຫາພຣະເຈົ້າຢາເວ ພຣະເຈົ້າຂອງຊາດອິດສະຣາເອນ.” 2 ຂ່າວຄາວ 36:13



ກະສັດຄົນສຸດທ້າຍຂອງຢູດາ, ກະສັດເສເດກີຢາໄດ້ສາບານວ່າຈະຈົງຮັກພັກດີຕໍ່ບາບີໂລນ, ແຕ່ກັບລະເມີດຕໍ່ຄຳສາບານທີ່ໃຫ້ໄວ້ ພະອົງຊົງປະຕິເສດຄຳຕັກເຕືອນຈາກພຣະເຈົ້າທີ່ໄດ້ບອກຜ່ານທາງ ເຢເຣມີຢາ ຊ້ຳແລ້ວຊ້ຳອີກ
(2 ຂ່າວຄາວ 36:12).



ເມື່ອກຸງເຢລູຊາເລັມຖືກອາກທັບບາບີໂລນອ້ອມເອົາໄວ້, ກະສັດເສເດກີຢາ ໄດ້ເອີ້ນເອົາເຢເຣມີຢາເຂົ້າມາເພື່ອຂໍຟັງພຣະວັດຈະນະຂອງພຣະເຈົ້າ (ຢຣມຢ 38:14).



ພຣະວັດຈະນະນັ້ນຊັດເຈນຫລາຍ, ຄືໃຫ້ຍອມຈຳນົນຕໍ່ບາບີໂລນ ແລ້ວພຣະອົງຈະຮັກສາຊີວິດຂອງເພິ່ນລອດເຖິງນະຄອນເຢຣູຊາເລັມໄວ້ (ຢຣມຢ 38:17-23). ແຕ່ກະສັດເດກີຢາປະຕິເສດພຣະວັດຈະນະນັ້ນ. ການດື້ດ້ານຂອງເພິ່ນນຳໄປສູ່ການຖືກທຳລາຍຂອງນະຄອນເຢຣູຊາເລັມ (2 ຂ່າວຄາວ. 36:13).

ເປັນເວລາ 11 ປີທີ່ພຣະເຈົ້າຊົງຕິດຕໍ່ກັບເພິ່ນໂດຍມອບພຣະຄຳແຫ່ງຄວາມຫວັງໃຫ້, ຖ້າວ່າເພິ່ນສາລະພາບກັບໃຈ ແລະ ປັບປ່ຽນພຶດຕິກຳ. ແຕ່ຫລາຍຄັ້ງກະສັດນັ້ນເຮັດທ່າທີຍອມຮັບ ແຕ່ກັບບໍ່ໄດ້ມີການປ່ຽນແປງແກ້ໄຂຢ່າງຈິງຈັງ (ຢຣມຢ 34:8-11).

ຄວາມໜ້າຊື່ໃຈຄົດ

"ສະນັ້ນ ພວກເຈົ້າຈົ່ງເຊື່ອຟັງ ແລະເຮັດຕາມທຸກສິ່ງທີ່ພວກເຂົາບອກ, ແຕ່ຢ່າຮຽນແບບການກະທຳຂອງພວກເຂົາ ເພາະພວກເຂົາບໍ່ໄດ້ເຮັດຕາມທີ່ພວກເຂົາໄດ້ສອນໄວ້." ມັດທາຍ 23:3



ເປັນຫຍັງພຣະເຢຊູຈຶ່ງເອີ້ນພວກຟາລີຊາຍວ່າເປັນຄົນໜ້າຊື່ໃຈຄົດ?

ເພາະວ່າພວກເຂົາເທດສະໜາຢ່າງໜຶ່ງ ແຕ່ປະຕິບັດອີກຢ່າງ(ມທ 23:3)

ພວກເຮົາເອົາພາລະໜັກໃຫ້ຄົນອື່ນແບກຮັບ, ແຕ່ພວກເຂົາບໍ່ຍອມແບກຮັບຊ່ວຍ (ມທ 23:4)

ເພາະສິ່ງທີ່ພວກເຂົາເຮັດນັ້ນເປັນພຽງການເສແສ້ງພຽງເພາະຢາກໃຫ້ຄົນອື່ນໄດ້ເຫັນ (ມທ. 23:5)

ພວກເຂົາມັກຢາກໄດ້ຮັບກຽດ ແຕ່ບໍ່ໃຫ້ກຽດຄົນອື່ນ (ມທ. 23:6-7, 11-12)

ພວກເຂົາສັນລະເສີນຜູ້ທຳນວາຍ ແຕ່ບໍ່ຍອມຮັບສິ່ງທີ່ຜູ້ທຳນວາຍບອກເຕືອນ (ມທ. 23:29-31)

ພວກເຂົາບອກວ່າຮັບໃຊ້ພຣະເຈົ້າ, ແຕ່ມີແຜນການຂ້າຜູ້ທີ່ຮັບໃຊ້ພຣະອົງ (ມທ 23:34)

ຄຳເວົ້າຂອງພຣະເຢຊູໄດ້ຕໍ່ສູ້ກັບພວກຟາລີຊາຍທີ່ໜ້າຊື່ໃຈຄົດ, ສິ່ງນີ້ໄດ້ຖືກບັນທຶກໄວ້ເພື່ອໃຫ້ພວກເຮົາໄດ້ມີຕົວຢ່າງເພື່ອຫລີກລ້ຽງ ແລະ ລະຖິ້ມເອົາທຸກໆຄວາມຄິດທີ່ນຳພວກເຮົາໄປສູ່ການປະຕິເສດພຣະເຈົ້າ

ການປະຍຸກໃຊ້ໃນຊີວິດ



“ເຫດການທັງໝົດເຫຼົ່ານີ້ ໄດ້ເກີດຂຶ້ນແກ່ບັນພະບຸລຸດຂອງພວກເຮົາ ກໍເພື່ອເປັນຕົວຢ່າງໃຫ້ແກ່ຜູ້ອື່ນ ແລະໄດ້ບັນທຶກເຫດການທັງໝົດນີ້ໄວ້ ເພື່ອເຕືອນສະຕິພວກເຮົາ ຊຶ່ງຢູ່ໃນຍຸກສຸດທ້າຍທີ່ກຳລັງຈະມາເຖິງ.” 1 ໂກຣິນໂທ 10:11

“ຜູ້ໃດທີ່ບໍ່ສາມາດຈື່ຈຳອະດີດໄດ້ ກໍ່ມີຕຳໜິ ເພາະຈະເຮັດໃຫ້ກັບໄປເຮັດຄວາມຜິດພາດແບບເກົ່າໄດ້” (George Santayana).


ປະສົບການລະຫວ່າງມະນຸດກັບພຣະເຈົ້າ ບໍ່ວ່າຈະເປັນເລື່ອງດີ ຫລື ເລື່ອງຮ້າຍກໍ່ຕາມ ເປັນສິ່ງທີ່ບໍ່ຄວນລະເລີຍຫລືເບິ່ງຂ້າມໄປ

ອະດີດມັກເປັນບົດຮຽນໃຫ້ນຳໄປສູ່ອະນາຄົດ, ອະດີດມັກຈະເປັນໂຕສ້າງບໍ່ຣິບົດໃຫ້ແກ່ສິ່ງທີ່ກຳລັງເກີດຂຶ້ນໃນປະຈຸບັນ ແລະ ສິ່ງທີ່ຈະເກີດຂຶ້ນໃນອະນາຄົດ

ພວກເຮົາບໍ່ໄດ້ກ່າວຫາໃຫ້ເຮັດຄວາມຜິດພາດຊ້ຳແລ້ວຊ້ຳອີກຄືກັບຄົນລຸ້ນກ່ອນໆ ຖ້າວ່າພວກເຮົາເອົາໃຈໃສ່ຕໍ່ຄຳເຕືອນຂອງພຣະຄຳພີ ແລະ ຂ່າວສານທີ່ພຣະອົງຊົງສົ່ງມາໃຫ້ພວກເຮົາຜ່ານທາງບັນດາຜູ້ທຳນວາຍຂອງພຣະອົງ (1 ກຣທ 10:11).




ຈົ່ງເຊື່ອໝັ້ນໃນສິ່ງທີ່ຜູ້ທຳນວາຍບອກພວກທ່ານ ແລະ ພວກທ່ານຈະເຮັດສຳເລັດໜ້າທີ່ (2 ຂ່າວຄາວ 20:20)



“ຈິດວິນຍານແຫ່ງການຕໍ່ຕ້ານແລະກ່າວຕັກເຕືອນຕໍ່ສິ່ງທີ່ບໍ່ດີ, ເຊິ່ງນຳໄປສູ່ການຂົ່ມເຫັງ ແລະ ການຖືກຂັງຄຸກຂອງທ່ານ ຢາເລມີຢານັ້ນ, ຍັງມີຢູ່ໃນປັດຈຸບັນ. ຫຼາຍຄົນປະຕິເສດທີ່ຈະ ເອົາໃຈໃສ່ຕໍ່ຄຳເຕືອນ, ໂດຍສະແຫວງຫາທີ່ຈະຟັງຄູສອນປອມ ຜູ້ທີ່ຍ້ອງຍໍຄວາມທະນົງຕົວຂອງ ພວກເຂົາ ແລະ ເບິ່ງຂ້າມການເຮັດຄວາມຊົ່ວຂອງພວກເຂົາ. ໃນວັນແຫ່ງຄວາມທຸກໂສກ ຜູ້ຄົນ ເຫຼົ່ານັ້ນຈະບໍ່ມີທີ່ເພິ່ງອັນໝັ້ນຄົງ, ບໍ່ມີຄວາມຊ່ວຍເຫຼືອຈາກສະຫວັນ. ບັນດາຜູ້ຮັບໃຊ້ທີ່ພຣະເຈົ້າ ຊົງເລືອກໄວ້ ຄວນຜະເຊີນກັບການທົດລອງ ແລະ ຄວາມທຸກລຳບາກທີ່ເກີດຂຶ້ນກັບພວກເຂົາ ຜ່ານທາງການຕິຕຽນ, ການລະເລີຍ, ແລະ ການປິດເບືອນຄວາມຈິງ ດ້ວຍຄວາມກ້າຫານ ແລະ ຄວາມອົດທົນ. ພວກເຂົາຄວນດຳເນີນການເຮັດວຽກທີ່ພຣະເຈົ້າໄດ້ຊົງມອບໃຫ້ພວກເຂົາເຮັດຢ່າງ ສັດຊື່ຕໍ່ໄປ, ໂດຍຈື່ໄວ້ສະເໝີວ່າ ບັນດາຜູ້ທຳນວາຍໃນສະໄໝບູຮານ, ພຣະຜູ້ຊ່ວຍໃຫ້ລອດຂອງ ມະນຸດສະໂລກ, ແລະ ບັນດາອັກຄະສາວົກຂອງພຣະອົງ ກໍໄດ້ທົນທຸກຈາກການກົດຂີ່ ແລະ ການຂົ່ມເຫັງເພາະເຫັນແກ່ພຣະຄຳພຽງດຽວກັນ.”

EGW (Prophets and Kings, p. 438)

APPENDIX: ວິໄສທັດຂອງທ່ານນາງ ເອເລັນ ຈີ ໄວທ໌



ນິມິດຂອງທ່ານນາງເອເລັນ ຈີ ໄວທ໌ທີ່ໄດ້ຮັບໃນທີ່ສາທາລະນະນັ້ນ ມາພ້ອມກັບການອັດສະຈັນ: ເພິ່ນບໍ່ໄດ້ຫາຍໃຈ, ຕາຂອງເພິ່ນຍັງຄົງເປີດຢູ່, ເພິ່ນເຄື່ອນໄຫວໂດຍບໍ່ຮູ້ໂຕເຖິງສິ່ງທີ່ກຳລັງເກີດຂຶ້ນຢູ່ອ້ອມຂ້າງເພິ່ນ



ເຖິງວ່າບາງຄົນຈະກ່າວຫາວ່າເພິ່ນນັ້ນສະກົດຈິດຕົນເອງກໍ່ຕາມ, (mesmerism), ແຕ່ເພິ່ນບໍ່ສາມາດຄວບຄຸມຕົນເອງໄດ້ວ່າ ຈະໄດ້ຮັບນິມິດຕອນໃດ ແລະ ນິມິດນັ້ນຈະອອກໄປຕອນໃດ

ຕອນທີ່ທ່ານນາງເອເລັນ ໄດ້ຮັບນິມິດນັ້ນ, ຜົວຂອງນາງໄດ້ຊວນຜູ້ຄົນທີ່ຢູ່ໃນເຫດການມາກວດສອບ ເພື່ອບໍ່ໃຫ້ມີຄວາມສົງໄສໃດໆກ່ຽວກັບສິ່ງທີ່ເພິ່ນກຳລັງໄດ້ຮັບຢູ່, ອາດຈະມີຜູ້ຕໍ່ຕ້ານເພິ່ນ ແຕ່ກໍ່ເພື່ອເສີມສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ທີ່ເຊື່ອໃນເພິ່ນເຊັ່ນກັນ.

ຜູ້ທີ່ກ່າວຫາ ລາວ ວ່າເປັນການສະກົດຈິດໂຕເອງນັ້ນ ຕ່າງກໍ່ຕົກໃຈອັດສະຈັນໃຈ ເມື່ອໄດ້ເຫັນວ່າ ລາວ ບໍ່ໄດ້ຫາຍໃຈແທ້ໆ ແລະ ໄດ້ໂຕນໜີດ້ວຍຄວາມຢ້ານກົວ ອອກຈາກສະຖານທີ່ທີ່ນິມິດນັ້ນກຳລັງເກີດຂຶ້ນ.